ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ສຳເລັດການເຂົ້າຮ່ວມກອງປະຊຸມລັດຖະມົນຕີການເງິນ ແລະ ຮອງຜູ້ວ່າການທະນາຄານກາງອາຊຽນ+3







ໃນວັນທີ 3 ພຶດສະພາ 2021 ໂດຍການມອບໝາຍຈາກ ທ່ານ ຜູ້ວ່າການ ທຫລ, ທ່ານ ນ. ວັດທະນາ ດາລາລອຍ ຮອງຜູ້ວ່າການ ທຫລ ພ້ອມດ້ວຍຄະນະ ໄດ້ສຳເລັດການເຂົ້າຮ່ວມກອງປະຊຸມລັດຖະມົນຕີການເງິນ ແລະ ຜູ້ວ່າການທະນາຄານກາງອາຊຽນ+3 (ASEAN Finance Ministers and Central Bank Governors: AFMGM+3) ພາຍໃຕ້ການເປັນປະທານຮ່ວມຂອງປະເທດ ສ. ເກົາຫຼີ ແລະ ບຣູໄນ ດາຣູສຊາລາມ ຊຶ່ງໄດ້ຈັດຂຶ້ນທີ່ ທຫລ ໂດຍຜ່ານລະບົບ Videoconference. ຜູ້ເຂົ້າຮ່ວມກອງປະຊຸມດັ່ງກ່າວ ປະກອບດ້ວຍລັດຖະມົນຕີການເງິນ ແລະ ຜູ້ວ່າການທະນາຄານກາງຂອງບັນດາປະເທດສະມາຊິກອາຊຽນ+3 ທັງໝົດ 13 ປະເທດ ແລະ 1 ເຂດພິເສດປົກຄອງພິເສດຮົງກົງ, ຕາງໜ້າຈາກອົງການຈັດຕັ້ງສາກົນເຊັ່ນ: ອົງການຕິດຕາມເສດຖະກິດມະຫາພາກອາຊຽນ+3 (AMRO), ອົງການການເງິນສາກົນ (IMF), ທະນາຄານພັດທະນາອາຊີ (ADB) 01.0 ແລະ ກອງເລຂາອາຊຽນ (ASEC).

ກອງປະຊຸມ ໄດ້ປຶກສາຫາລື ແລະ ແລກປ່ຽນທັດສະນະກ່ຽວກັບສະພາບການພັດທະນາ ເສດຖະກິດມະຫາພາກຂອງພາກພື້ນອາຊຽນ+3 ພ້ອມທັງການສ້າງຄວາມເຂັ້ມແຂງໃຫ້ແກ່ການຮ່ວມມືຂະແໜງການເງິນອາຊຽນ+3. ກອງປະຊຸມໄດ້ຮັບຮອງແຜນການກຳນົດອັດຕາດອກເບ້ຍອ້າງອີງໃໝ່ຂອງກອງທຶນການຮ່ວມມືຫຼາຍຝ່າຍພາຍໃຕ້ຂໍ້ລິເລີ່ມຊຽງໃໝ່ (CMIM) ໂດຍໄດ້ຄາດວ່າຈະໃຫ້ສຳເລັດການຄັດເລືອກອັດຕາທີ່ເໝາະສົມເພື່ອແທນ LIBOR ພາຍໃນປີ 2021; ແຜນການກຳນົດກົນໄກການປະກອບສ່ວນສະກຸນເງິນທ້ອງຖິ່ນເຂົ້າໃນການປ່ອຍກູ້ ແລະ ທິດທາງໃນຕໍ່ໜ້າໃນການປັບປຸງ CMIM. ນອກນີ້, ຍັງໄດ້ຫາລືກ່ຽວກັບການສ້າງຄວາມເຂັ້ມແຂງໃນການຕິດຕາມສະພາບເສດຖະກິດມະຫາພາກຂອງພາກພື້ນອາຊຽນ+3 ຂອງອົງການ AMRO, ແລະ ວຽກງານຂໍ້ລິເລີ່ມຕະຫຼາດພັນທະບັດອາຊີ (ABMI) ເພື່ອສົ່ງເສີມການອອກພັນທະບັດເປັນສະກຸນເງິນທ້ອງຖິ່ນຂອງອາຊຽນ+3.

ກອງປະຊຸມ AFMGM+3 ໄດ້ສຳເລັດຢ່າງຈົບງາມ ທ່າມກາງການປະກອບຄຳເຫັນຂອງປະເທດສະມາຊິກຢ່າງຟົດຟື້ນ ເພື່ອເສີມຂະຫຍາຍການຮ່ວມມືໃນພາກພື້ນໃຫ້ມີປະສິດທິພາບ ແລະ ແໜ້ນແຟ້ນກວ່າເກົ່າ.

ຂ່າວ-ພາບ: ກົມຮ່ວມມືສາກົນ, ທຫລ